ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ຄະນະປະຈຳ

ເລກທີ 57 / ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 31 / 05 / 24

# ມະຕິ

## ຂອງຄະນະປະຈຳສະພາແຫ່ງຊາດ
## ວ່າດ້ວຍ ພິຈາລະນາຮັບຮອງ ການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້

- ອີງຕາມ ກົດໝາຍວ່າດ້ວຍ ສະພາແຫ່ງຊາດ ສະບັບເລກທີ 64/ສພຊ, ລົງວັນທີ 9 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍ ປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍ ທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ໜັງສືສະເໜີ ຂອງລັດຖະບານ ສະບັບເລກທີ 10/ລບ, ລົງວັນທີ 30 ມັງກອນ 2024.

ຜ່ານການຄົ້ນຄວ້າ, ພິຈາລະນາ ຢ່າງເລິກເຊິ່ງ ແລະ ຖີ່ຖ້ວນ ຕໍ່ກັບໜັງສືສະເໜີ ຂອງລັດຖະບານ ກ່ຽວກັບ ການສະເໜີຂໍອະນຸມັດທາງດ້ານຫລັກ ການໃນການຂຶ້ນທະບຽນອອກໃບຕາດິນກະສິກຳ ແລະ ດິນປຸກສ້າງ ທີ່ຢູ່ໃນ ຂອບເຂດ 3 ປະເພດປ່າໃຫ້ປະຊາຊົນ ໃນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຄັ້ງວັນທີ 1 ເມສາ 2024.

### ຄະນະປະຈຳສະພາແຫ່ງຊາດ ຕົກລົງ:

**ມາດຕາ 1** ເຫັນດີຮັບຮອງເອົາການສະເໜີຂອງ ລັດຖະບານ ກ່ຽວກັບ ຂຶ້ນທະບຽນອອກໃບຕາດິນ ກະສິກຳ (ດິນນາ, ດິນສວນ), ດິນປຸກສ້າງທີ່ຢູ່ອາໄສຂອງປະຊາຊົນ ໃນຂອບເຂດ 3 ປະເພດປ່າ ຕາມ ມາດຕາ 44 ຂອງກົດ ໝາຍວ່າດ້ວຍ ທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ທີ່ມີຂໍ້ມູນຄົບຖ້ວນ, ຖືກຕ້ອງ ຕາມເງື່ອນໄຂທີ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ເພື່ອເປັນການຮັບຮູ້ສິດນຳໃຊ້ທີ່ດິນ ຂອງປະຊາ ຊົນທີ່ອາໄສຢູ່ໃນເຂດທີ່ດິນປ່າໄມ້ ໃຫ້ມີເນື້ອທີ່ປຸກສ້າງ ແລະ ເນື້ອທີ່ ທຳການຜະລິດຢ່າງຖາວອນ.

**ມາດຕາ 2** ມອບໃຫ້ລັດຖະບານ ຊີ້ນຳໃຫ້ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບ ກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃຫ້ກຳນົດຄືນພື້ນທີ່ ທີ່ຈະດຳ ເນີນການຈັດຕັ້ງປະຕິບັດ ອອກໃບຢັ້ງຢືນການນຳໃຊ້ທີ່ດິນ ຕາມ ມາດຕາ 44 ແລະ ໃບທະບຽນ ອອກໃບຕາ ດິນ ຕາມ ມາດຕາ 130 ໃຫ້ປະຊາຊົນຢ່າງຈະແຈ້ງ, ຄົບຖ້ວນ ແລະ ຮັດກຸມ ຕາມ ກົດໝາຍວ່າດ້ວຍ ທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ແລະ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019.

**ມາດຕາ 3** ມອບໃຫ້ ລັດຖະບານ ຊີ້ນໍາຂະແໜງການທີ່ກ່ຽວຂ້ອງ ຕິດຕາມກວດກາ ການຈັດຕັ້ງປະຕິບັດ ມະຕິສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 4** ມອບໃຫ້ ກໍາມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ກໍາມາທິການກ່ຽວຂ້ອງ ຂອງສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ ແລະ ສະພາປະຊາຊົນແຂວງ ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ ແລະ ຂອບເຂດສິດຂອງຕົນ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 5** ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຄະນະປະຈໍາສະພາແຫ່ງຊາດ**

**ປະທານ**

ປະທານສະພາແຫ່ງຊາດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ປອ ໄຊສົມພອນ ພົມວິຫານ